# ກອງທຶນຫຼຸດຜ່ອນຄວາມທຸກຍາກ
# (ປະກາດຮັບສະໝັກພະນັກງານ)

ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ເປັນໂຄງການພາຍໃຕ້ທຶນຊ່ວຍເຫລືອຈາກທະນາຄານໂລກ ແລະອົງການຮ່ວມມືດ້ານການພັດທະນາຂອງປະເທດສະວິດເຊີແລນ ເພື່ອສະໜອງພື້ນຖານໂຄງລ່າງຂະໜາດນ້ອຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ປະຊາຊົນຢູ່ກຸ່ມບ້ານທີ່ທຸກຍາກ. ປະຈຸບັນ ທລຍ ໄດ້ຮັບການສືບຕໍ່ໂຄງການໄລຍະທີສອງ (2011- 2016) ຊຶ່ງໃນນີ້ ຈະມີການປະຕິບັດກິດຈະກຳໃໝ່ພາຍໃຕ້ໂຄງການທີ່ມີຊື່ວ່າ "ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ" ສະນັ້ນ,ຈຶ່ງມີຄວາມຕ້ອງການພະນັກງານທີ່ມີຄວາມຮູ້, ຄວາມສາມາດ, ປະສົບການ ແລະ ມີເປົ້າໝາຍໃນການເຮັດວຽກຊ່ວຍເຫລືອຜູ້ທຸກຍາກ ເພື່ອປະກອບເຂົ້າໃນການຈັດຕັ້ງ. ພ້ອມກັນນັ້ນ ຍັງຕ້ອງການນັກສຶກສາຈົບໃໝ່ ເພື່ອເປັນອາສາສະໝັກ ປະຈຳຢູ່ຂັ້ນກຸ່ມບ້ານ ຂອງແຕ່ລະແຂວງ/ເມືອງ ດັ່ງນີ້:

1. **<u>ຜູ້ປະສານງານຂັ້ນເມືອງ</u>**
   **2 ຕຳແໜ່ງ, ປະຈຳຢູ່ເມືອງ ວຽງທອງ (ແຂວງຫົວພັນ) ແລະ ເມືອງ ເຊໂປນ (ແຂວງສະຫວັນນະເຂດ)**
   **<u>ເງື່ອນໄຂທາງດ້ານຄວາມຮູ້ ແລະ ປະສົບການຂອງຜູ້ສະໝັກ</u>:**

- ຈົບການສຶກສາລະດັບປະລິນຍາຕີ ສາຂາກະສິກຳ ຫຼື ການແພດ (ດ້ານການຮັກສາສຸຂະພາບຂັ້ນຕົ້ນ), ພັດທະນາຊຸມຊົນ, ສັງຄົມວິທະຍາ, ເສດຖະກິດຊົນນະບົດ, ການສຶກສາດ້ານການພັດທະນາ ຫລື ສາຂາອື່ນໆ ທີ່ກ່ຽວຂ້ອງ;
- ມີປະສົບການ ດ້ານການນຳພາທີມງານ, ການປະສານງານກັບອົງການຈັດຕັ້ງຕ່າງໆໃນຂັ້ນທ້ອງຖິ່ນ, ຕິດຕາມກວດກາກິດຈະກຳໂຄງການ ທີ່ຕິດພັນກັບວຽກປຸກລະດົມຂົນຂວາຍຊຸມຊົນ ຫລືກ່ຽວຂ້ອງກັບກິດຈະກຳ ປັບປຸງຊີວິດການເປັນຢູ່ ຫລືໂພສະນາການ;
- ມີປະສົບການ ກ່ຽວກັບວຽກງານເຊື່ອມບົດບາດຍິງຊາຍ ແລະ ໃຫ້ການສະໜັບສະໜູນຊ່ວຍເຫຼືອກຸ່ມຊ່ວຍເຫຼືອຊຶ່ງກັນແລະ ກັນ(ກຸ່ມທ້ອນເງິນ, ກຸ່ມຫັດຖະກຳ ການຜະລິດ ແລະ ກຸ່ມສ້າງລາຍຮັບດ້ານອື່ນໆ)ໃນເຂດຊົນນະບົດ ຫ່າງໄກສອກຫລີກ ທີ່ມີກຸ່ມຊົນເຜົ່າແຕກຕ່າງກັນ;
- ມີປະສົບການດ້ານການຈັດຕັ້ງຊຸດຝຶກອົບຮົມ ແລະ ກອງປະຊຸມ;
- ມີປະສົບການດ້ານການປະສານງານກັບອຳນາດການປົກຄອງຂັ້ນທ້ອງຖິ່ນ ແລະ ບັນດາໂຄງການການພັດທະນາຊົນນະບົດ ຕ່າງໆ; ລື້ງເຄີຍກັບການປະຕິບັດວຽກຂອງໂຄງການລັດຖະບານ ແລະ ໂຄງການຂອງສາກົນມາກ່ອນ;
- ມີຄວາມຮູ້ຄວາມສາມາດໃນການນຳໃຊ້ຄອມພິວເຕີໃນລະດັບປານກາງ (Ms Word, Excel, PowerPoint)
- ຖ້າເປັນຜູ້ຍິງ ແລະ ເຄີຍເຮັດວຽກກ່ຽວກັບການພັດທະນາຊົນນະບົດມາກ່ອນຈະໄດ້ຮັບການພິຈາລະນາເປັນ ກໍລະນີພິເສດ.

2. <u>ວິຊາການດ້ານໂພສະນາການ ແລະ ດ້ານການປັບປຸງຊີວິດການເປັນຢູ່</u>
**ຕ້ອງການ 4 ຕໍາແໜ່ງ ເພື່ອປະຈໍາຢູ່ເມືອງ ວຽງທອງ (ຫົວພັນ) 2 ຕໍາແໜ່ງ ແລະ ເມືອງ ເຊໂປນ (ສະຫວັນນະເຂດ) 2 ຕໍາແໜ່ງ.**
**<u>ເງື່ອນໄຂທາງດ້ານຄວາມຮູ້ ແລະ ປະສົບການຂອງຜູ້ສະໝັກ:</u>**

- ຈົບການສຶກສາລະດັບປະລິນຍາຕີ ສາຂາກະສິກໍາ ຫຼື ການແພດ, ພັດທະນາຊຸມຊົນ, ສັງຄົມວິທະຍາ, ເສດຖະກິດຊົນນະບົດ, ການສຶກສາດ້ານການພັດທະນາ ແລະ ສາຂາກ່ຽວຂ້ອງດ້ານອື່ນໆ;
- ມີປະສົບການໃນການຈັດຕັ້ງປະຕິບັດ ແລະ ຕິດຕາມກິດຈະກໍາຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ ທີ່ມີຫລາຍຊົນ ເຜົ່າແຕກຕ່າງກັນ ເພື່ອເຮັດໃຫ້ຊີວິດການເປັນຢູ່ ແລະ ໂພສະນາການຂອງເຂົາເຈົ້າໄດ້ຮັບການປັບປຸງ;
- ມີປະສົບການດ້ານການຈັດຊຸດຝຶກອົບຮົມ, ກອງປະຊຸມຢູ່ຂັ້ນຊຸມຊົນ ໂດຍການນໍາໃຊ້ຮູບແບບ ການວາງແຜນແບບ ມີສ່ວນຮ່ວມ ແຕ່ລຸ່ມຂຶ້ນເທິງ (PRA);
- ມີປະສົບການດ້ານການສ້າງຄວາມເຂັ້ມແຂງ ແລະ ການມອບສິດໃຫ້ແກ່ແມ່ຍິງ;
- ເຄີຍເຮັດວຽກກັບໂຄງການລັດຖະບານ ແລະ ໂຄງການສະໜັບສະໜູນທຶນຂອງສາກົນມາກ່ອນ;
- ມີຄວາມຮູ້ກ່ຽວກັບຄອມພິວເຕີລະດັບປານກາງ (Ms Word, Excel,);
- ຖ້າເປັນຜູ້ຍິງ ແລະ ເຄີຍເຮັດວຽກກ່ຽວກັບການພັດທະນາຊົນນະບົດມາກ່ອນຈະໄດ້ຮັບການພິຈາລະນາເປັນກໍລະນີພິເສດ.

3. <u>ນັກສຶກສາຈົບໃໝ່ ຫລື ອາສາສະໝັກ ເພື່ອເປັນຜູ້ປະສານງານໂຄງການປັບປຸງຊີວິດການເປັນຢູ່ ແລະ ໂພສະນາການຂັ້ນບ້ານ</u>
**12 ຕໍາແໜ່ງ, ປະຈໍາຢູ່ 6 ກຸ່ມບ້ານ (3ກຸ່ມບ້ານຢູ່ ເມືອງ ວຽງທອງ ແຂວງ ຫົວພັນ ແລະ 3 ກຸ່ມບ້ານຢູ່ ເມືອງ ເຊໂປນແຂວງ ສະຫວັນນະເຂດ**
**<u>ເງື່ອນໄຂທາງດ້ານຄວາມຮູ້ ແລະ ປະສົບການຂອງຜູ້ສະໝັກ:</u>**

- ຈົບປະລິນຍາຕີ ຫຼື ຈົບຊັ້ນສູງຂະແໜງກະສິກໍາ ຫຼື ພັດທະນາຊົນນະບົດ (ສໍາລັບຜູ້ປະສານງານ ດ້ານການປັບປຸງຊີວິດການເປັນຢູ່) ແລະ ຈົບຂະແໜງການແພດ ຫຼື ການຮັກສາສຸຂະພາບຂັ້ນຕົ້ນ (ສໍາລັບຜູ້ປະສານງານດ້ານໂພສະນາການ) ຫຼື ຈົບຂະແໜງວິທະຍາສາດສັງຄົມ, ເສດຖະກິດຊົນນະບົດ, ການສຶກສາດ້ານການພັດນາ ແລະ ຂະແໜງການ ກ່ຽວຂ້ອງອື່ນໆ;
- ສາມາດເຮັດວຽກຮ່ວມກັບຊຸມຊົນໃນເຂດຊົນນະບົດ ຫ່າງໄກສອກຫລີກ;
- ມີປະສົບການໃນການເດີນທາງ ແລະ ຢູ່ກັບປະຊາຊົນຜູ້ທຸກຍາກ ໃນເຂດຊົນນະບົດຫ່າງໄກສອກຫລີກ ຈະໄດ້ຮັບການພິຈາລະນາເປັນພິເສດ;

- ອາຍຸລະຫວ່າງ 20 - 35 ປີ ແລະ ມີສຸຂະພາບແຂງແຮງ;
- ມີຄວາມພ້ອມທີ່ຈະເຮັດວຽກຢ່າງນ້ອຍ 2 ປີ ຕໍ່ເນື່ອງກັນ ດ້ວຍຄວາມສະມັກໃຈ (ຊຶ່ງຈະເລີ້ມແຕ່ ກາງເດືອນ ທັນວາ 2011 ເປັນຕົ້ນໄປ);
- ຜູ້ສະໝັກທ່ານໃດສາມາດເວົ້າ ພາສາທ້ອງຖິ່ນໄດ້ ໜຶ່ງໃນພາສາຕໍ່ໄປນີ້ ເຊັ່ນ (ກຶມມຸ, ລາເມດ, ມົ້ງ, ຢ້າວ, ຕຣີ ແລະ ມາກອງ, ກາຕາງ, ປາກີກ, ກາຕູ, ກາລຸງ, ຍ່ອຍ) ຈະໄດ້ຮັບການພິຈາລະນາເປັນພິເສດ.
- ຖ້າເປັນຜູ້ຍິງ ແລະ ເຄີຍເຮັດວຽກກ່ຽວກັບການພັດທະນາຊຸມຊົນມາກ່ອນຈະໄດ້ຮັບການ ພິຈາລະນາເປັນກໍລະນີພິເສດ.

<u>ໝາຍເຫດ:</u> 1). **ສໍາລັບທຸກໆຕໍາແໜ່ງງານ, ຖ້າຜູ້ສະໝັກເປັນຄົນທ້ອງຖິ່ນເປົ້າໝາຍຈະໄດ້ຮັບການພິຈາລະນາເປັນພິເສດ.**

**2). ສໍາລັບຕໍາແໜ່ງອາສາສະໝັກ ຫລື ນັກສຶກສາຈົບໃໝ່ (ປະສານງານຂັ້ນບ້ານ) ຈະໄດ້ຮັບເບັ້ຍລ້ຽງໃນການລົງເຮັດວຽກຢູ່ພາກສະໜາມຕົວຈິງ ຕາມອັດຕາ ແລະ ລະບຽບການຂອງໂຄງການ.**

ສໍາລັບທ່ານທີ່ສົນໃຈຈະສະໝັກ ສາມາດຍື່ນເອກະສານສະໝັກງານ ໄປຍັງທີ່ຢູ່ທີ່ທ່ານສະດວກທີ່ສຸດ ດັ່ງນີ້:

- ຫ້ອງການ ທລຍ ສູນກາງ ຊຶ່ງຕັ້ງຢູ່ຫ້ອງວ່າການລັດຖະບານ, ນະຄອນຫລວງວຽງຈັນ (ຕິດຕໍ່ ທ່ານ ນ. ເຂັມພອນ ມະນີເພັດ, ໂທລະສັບ: 021 261 479-80, ຕໍ່ 114 ແຟັກ: 021 261 481), email: khemphone@prflaos.org
- ຫ້ອງການ ທລຍ ແຂວງສະຫວັນນະເຂດ ຊຶ່ງຕັ້ງຢູ່ເມືອງເຊໂປນ (ຕິດຕໍ່ ທ່ານ ນາງ ຄໍາພອງ ໄຊສົມບັດ, ໂທລະສັບ/ແຟັກ: 041 214 902).
- ຫ້ອງການ ທລຍ ແຂວງຫົວພັນ ຊຶ່ງຕັ້ງຢູ່ກັບຫ້ອງການກໍ່ສ້າງຮາກຖານ ແລະ ພັດທະນາຊຸມຊົນຮອບດ້ານແຂວງຫົວພັນ (ຕິດຕໍ່ ທ່ານ ນ. ພາທອງ ແພງສົມພັນ, ໂທລະສັບ/ແຟັກ: 064 313 000).

**<u>ເອກະສານຍື່ນສະໝັກປະກອບມີ</u>:**

1. ໃບຄໍາຮ້ອງສະໝັກງານ ຂຽນດ້ວຍຕົນເອງ (ລະບຸຕໍາແໜ່ງ ແລະ ບ່ອນປະຈໍາການ),
2. ຊີວະປະຫວັດທີ່ປະກອບມີຂໍ້ມູນຄົບຖ້ວນ (ອາດຈະໃຊ້ແບບຟອມທົ່ວໄປ ຫລື ຂຽນດ້ວຍຕົນເອງ) ເປັນພາສາລາວ ກໍ່ໄດ້ ຫລື ຖ້າເປັນພາສາອັງກິດຍິ່ງເປັນການດີ.
3. ເອກະສານຢັ້ງຢືນຕ່າງໆ: ໃບປະກາດຈົບການສຶກສາຕ່າງໆ, ໃບຄະແນນຈົບການສຶກສາ (ຖ້າມີ), ໃບຜ່ານງານ, ສໍາເນົາບັດປະຈໍາຕົວ ຫລື ປື້ມສໍາມະໂນຄົວ, ພ້ອມດ້ວຍ ຮູບຖ່າຍຂະໜາດ 3x4 (1ໃບ).

## ວັນທີສຸດທ້າຍຂອງການເປີດຮັບສະໝັກ: 14 ທັນວາ 2011

ກະລຸນາຮັບຊາບວ່າ ກອງທຶນຈະທໍາການຕິດຕໍ່ຫາຜູ້ທີ່ເໝາະສົມ ແລະຖືກຕ້ອງຕາມເງື່ອນໄຂທີ່ຄົບຖ້ວນເທົ່ານັ້ນ ເພື່ອດໍາເນີນຂະບວນການປະເມີນ. (ເອກະສານສະໝັກທຸກຢ່າງຈະບໍ່ອະນຸຍາດໃຫ້ຖອນຄືນ).

**(ຂໍຂອບໃຈທຸກທ່ານ ທີ່ໃຫ້ຄວາມສົນໃຈຮ່ວມວຽກກັບກອງທຶນຫລຸດຜ່ອນຄວາມທຸກຍາກ)**